# News Release

Connect with DOL at [http://social.dol.gov](http://social.dol.gov)!

U.S. Department of Labor
Office of Public Affairs
Washington, D.C.
Release Number: 11-1614-NAT

For Immediate Release Dec. 8, 2011

Contact: Laura McGinnis | Mike Trupo
Phone: 202-693-4653 | 202-693-6588
Email: mcginnis.laura.k@dol.gov | trupo.michael2@dol.gov

## ກະຊວງແຮງງານຂອງສະຫະລັດເລັ່ງຫາວິທີການເພື່ອປັບປຸງໂອກາດການເຮັດວຽກໃຫ້ກັບຄົນພິການອາເມຣິກາ ໂດຍການກໍານົດເປົ້າໝາຍການວ່າຈ້າງທີ່ສໍາຄັນໃຫ້ກັບຜູ້ຮັບເໝົາຂອງລັດຖະບານກາງ ແລະຜູ້ຮັບເໝົາຍ່ອຍ

**ທີ່ນະຄອນຫຼວງວໍຊິງຕັນ** – ກະຊວງແຮງງານຂອງສະຫະລັດກໍາລັງນໍາສະເໜີກົດລະບຽບໃໝ່ທີ່ຈະມີການຮຽກຮ້ອງໃຫ້ຜູ້ຮັບເໝົາຂອງລັດຖະບານກາງ ແລະຜູ້ຮັບເໝົາຍ່ອຍກໍານົດເປົ້າໝາຍການວ່າຈ້າງໃຫ້ມີກໍາລັງແຮງງານເປັນຄົນຜູ້ທີ່ມີຄວາມພິການ 7 ເປີເຊັນ ຢູ່ໃນທ່າມກາງຄວາມຮຽກຮ້ອງຕ້ອງການອື່ນໆນັ້ນ. ຫ້ອງການແຜນງານການປະຕິບັດຕາມສັນຍາລັດຖະບານກາງຂອງກະຊວງຂໍໃຫ້ສັງຄົມປະກອບຄໍາຄິດເຫັນຕໍ່ກັບບົດສະເໜີນີ້ ເຊິ່ງຈະໄດ້ນໍາອອກຕີພິມເຜີຍແຜ່ໃນສະບັບວັນທີ 9 ທັນວາ ຂອງສໍານັກງານທະບຽນຂອງລັດຖະບານກາງ.

ກົດລະບຽບທີ່ທາງຫ້ອງການແຜນງານການປະຕິບັດຕາມສັນຍາລັດຖະບານກາງ (OFCCP) ໄດ້ນໍາສະເໜີຈະສ້າງຄວາມເຂັ້ມແຂງທາງດ້ານເງື່ອນໄຂຄວາມຕ້ອງການໃນການດໍາເນີນງານທີ່ໝັ້ນຄົງຕາມທີ່ໄດ້ກໍານົດໄວ້ຢູ່ໃນຂໍ້ທີ 503 ຂອງພະລາດຊະກໍານົດການຟື້ນຟູປີ 1973 ທີ່ບັງຄັບໃຫ້ຜູ້ຮັບເໝົາຂອງລັດຖະບານກາງ ແລະຜູ້ຮັບເໝົາຍ່ອຍເປີດໃຫ້ມີໂອກາດການຈ້າງງານທີ່ເທົ່າທຽມກັນສໍາລັບແຮງງານຜູ້ພິການທີ່ມີເງື່ອນໄຂຄົບຖ້ວນ. ການປ່ຽນແປງທາງດ້ານກົດລະບຽບທີ່ໄດ້ສະເໜີນີ້ຈະໃຫ້ລາຍລະອຽດການດໍາເນີນການສະເພາະທີ່ທາງຜູ້ຮັບເໝົາຈະຕ້ອງປະຕິບັດຢູ່ໃນວຽກງານການຮັບຄົນເຂົ້າເຮັດວຽກ, ການຝຶກອົບຮົມ, ການເກັບຮັກສາບັນທຶກ ແລະການເຜີຍແຜ່ນະໂຍບາຍ, ເຊິ່ງກໍ່ຄ້າຍຄືກັບສິ່ງທີ່ໄດ້ຮຽກຮ້ອງຜ່ານມາດົນນານແລ້ວ ເພື່ອສົ່ງເສີມຄວາມສະເໝີພາບໃຫ້ກັບແມ່ຍິງ ແລະຊົນກຸ່ມນ້ອຍຢູ່ໃນບ່ອນເຮັດວຽກ. ນອກຈາກນັ້ນ, ກົດລະບຽບຍັງຈະອະທິບາຍເຖິງລະດັບຄາດໝາຍຂອງທາງ OFCCP ທີ່ກໍານົດໃຫ້ກັບຜູ້ຮັບເໝົາ ໂດຍການໃຫ້ທິດຊີ້ນໍາສະເພາະກ່ຽວກັບວິທີການທີ່ຈະຕ້ອງປະຕິບັດຕາມກົດໝາຍ.

**ທ່ານ ຮິວດາ ແອລ ໂຊລິສ** (Hilda L. Solis) **ລັດຖະມົນຕີກະຊວງແຮງງານ ກ່າວວ່າ** “**ກົດລະບຽບທີ່ໄດ້ສະເໜີນີ້ແມ່ນເປັນບາດກ້າວອັນສໍາຄັນທີ່ສຸດອັນໜຶ່ງໃນການປົກປ້ອງສິດທິພົນລະເມືອງຂອງຜູ້ເຮັດວຽກທີ່ເປັນຄົນພິການ ຕາມການຜ່ານມະຕິຂອງພະລາດຊະກໍານົດຄົນພິການອາເມຣິກາ**”. “**ທ່ານປະທານາທິບໍດີ ໂອບະມາ ໄດ້ໃຫ້ຄໍາໝັ້ນສັນຍາກັບຄົນພິການ. ກົດລະບຽບທີ່ໄດ້ສະເໜີນີ້ຈະຊ່ວຍໃຫ້ບັນດາຜູ້ຮັບເໝົາຂອງລັດຖະບານກາງປະຕິບັດຄວາມຮັບຜິດຊອບທາງດ້ານກົດໝາຍຂອງຕົນເອງໄດ້ດີຂຶ້ນ ເພື່ອຈ້າງເອົາຜູ້ເຮັດວຽກທີ່ມີຄວາມພິການຜູ້ທີ່ມີເງື່ອນໄຂຄົບຖ້ວນ**.”

ເຖິງແມ່ນວ່າຈະມີກົດລະບຽບໃນຂໍ້ທີ 503 ມາເປັນເວລາຫຼາຍສິບປີແລ້ວກໍ່ຕາມ, ອັດຕາການຫວ່າງງານຂອງຄົນພິການໃນປະຈຸບັນແມ່ນຢູ່ທີ່ 13 ເປີເຊັນ, ເຊິ່ງກໍ່ເທົ່າກັບອັດຕາ 1 1/2 ເທື່ອຂອງຄົນຜູ້ທີ່ບໍ່ພິການ. ສິ່ງທີ່ຍໍ້ທໍ້ໄປຫຼາຍກວ່ານັ້ນແມ່ນອີງຕາມຂໍ້ມູນທີ່ຕີພິມອອກໂດຍທາງຫ້ອງການສະຖິຕິແຮງງານຂອງກະຊວງໃນອາທິດທີ່ແລ້ວນີ້ ທີ່ສະແດງໃຫ້ເຫັນເຖິງຄວາມບໍ່ສະເໝີພາບທີ່ຈັດເຈນທີ່ທາງຜູ້ພິການຢູ່ໃນເກນອາຍຸເຮັດວຽກປະເຊີນໜ້າຢູ່, ນັ້ນກໍ່ຄືມີເຖິງ 79.2 ເປີເຊັນທີ່ຢູ່ນອກກໍາລັງແຮງງານ ໂດຍປຽບທຽບກັບຜູ້ທີ່ບໍ່ມີຄວາມພິການແມ່ນ 30.5 ເປີເຊັນ.

**– ຍັງມີຕໍ່ –**

ທ່ານ ແພັດທຣິກເຊຍ ເອ ຊິວ (Patricia A. Shiu) ຫົວໜ້າຫ້ອງການ OFCCP ກ່າວວ່າ "ເປັນເວລາເກືອບ 40 ປີແລ້ວ ທີ່ກົດລະບຽບໄດ້ເວົ້າວ່າໃຫ້ທາງຜູ້ຮັບເໝົາຕ້ອງໃຊ້ຄວາມພະຍາຍາມ 'ດ້ວຍຄວາມຈິງໃຈ' ໃນການບັນຈຸ ແລະຈ້າງຜູ້ພິການເຂົ້າເຮັດວຽກ. ເປັນທີ່ເຫັນໄດ້ຊັດເຈນວ່າເລື່ອງນີ້ແມ່ນບໍ່ໄດ້ຜົນເລີຍ". "ການສະເໜີຂອງພວກເຮົາຈະກຳນົດເປົ້າໝາຍສະເພາະທີ່ຮຽກຮ້ອງໃຫ້ມີຄວາມຮັບຜິດຊອບຕົວຈິງ ແລະຈະໃຫ້ທິດຊີ້ນຳທີ່ຈະແຈ້ງທີ່ສຸດທີ່ເປັນໄປໄດ້ກັບທາງນາຍຈ້າງໃນການປະຕິບັດຕາມກົດໝາຍ. ສິ່ງທີ່ໄດ້ຮັບການວັດແທກແມ່ນໄດ້ເຮັດ. ແລະພວກເຮົາມີໜ້າທີ່ເຮັດໃຫ້ສິ່ງເຫຼົ່ານີ້ໄດ້ຮັບການຈັດຕັ້ງປະຕິງັດ."

ການກຳນົດເປົ້າໝາຍ 7 ເປີເຊັນໃນການຈ້າງງານໃຫ້ເປັນຜູ້ພິການນັ້ນແມ່ນຈະເປັນເຄື່ອງມືອັນໜຶ່ງກັບຜູ້ຮັບເໝົາ ເພື່ອວັດແທກປະສິດທິພາບໃນດ້ານຄວາມພະຍາຍາມການປະຕິບັດທີ່ເຂັ້ມແຂງຂອງເຂົາເຈົ້າ ແລະຈາກນັ້ນ ຈິ່ງເປັນການໃຫ້ຂໍ້ມູນໃນການຕັດສິນໃຈຂອງເຂົາເຈົ້າ. ກົດລະບຽບທີ່ໄດ້ສະເໜີແມ່ນຍັງຈະປັບປຸງເລື່ອງການເກັບກຳຂໍ້ມູນ ແລະເງື່ອນໄຂຄວາມຕ້ອງການໃນການເກັບຮັກສາບັນທຶກ, ລວມທັງເພື່ອການປະກອບເອກະສານ ແລະການດຳເນີນການແກ້ໄຂຄຳສະເໜີເລື່ອງທີ່ພັກອາໄສຕາມຄວາມເໝາະສົມ ເພື່ອປັບປຸງໃນໜ້າທີ່ຄວາມຮັບຜິດຊອບ. ນອກຈາກນັ້ນ, ມັນຍັງຈະເປັນການຮັບປະກັນເລື່ອງການສຳຫຼວດກວດກາຕົນເອງປະຈຳປີໃນເລື່ອງຄວາມພະຍາຍາມໃນການປະກອບພະນັກງານ ແລະການຜັນຂະຫຍາຍຂອງນາຍຈ້າງ, ແລະເພີ່ມເງື່ອນໄຂອັນໃໝ່ໃຫ້ກັບຜູ້ຮັບເໝົາໃນການຈັດບັນຊີການເປີດຮັບສະໝັກວຽກຕ່າງໆ ເພື່ອເພີ່ມຈຳນວນຜູ້ສະໝັກທີ່ມີເງື່ອນໄຂຄົບຖ້ວນຂອງເຂົາເຈົ້າ.

ເພື່ອຈະອ່ານເບິ່ງແຈ້ງການໃນການສ້າງກົດລະບຽບທີ່ໄດ້ສະເໜີ ຫຼືສົ່ງຄຳຄິດເຫັນ, ແມ່ນໃຫ້ເຂົ້າໄປເບິ່ງທີ່ເວັບໄຊທ໌ການສ້າງກົດລະບຽບຂອງລັດຖະບານກາງທີ່ http://www.regulations.gov. ທ່ານຍັງສາມາດສົ່ງຄຳຄິດເຫັນໂດຍທາງໄປສະນີໄດ້ ໂດຍສົ່ງໄປໃຫ້ກັບທ່ານ ດີບຣາ ຄາ (Debra Carr), ຫ້ອງການແຜນງານການປະຕິບັດຕາມສັນຍາລັດຖະບານກາງ (OFCCP), ກະຊວງແຮງງານຂອງສະຫະລັດ, ຫ້ອງ C-3325, 200 ຖະໜົນລັດຖະທຳມະນູນ NW, ນະຄອນຫຼວງວໍຊິງຕັນ ດີຊີ 20210. ທຸກຄຳເຫັນແມ່ນຈະຕ້ອງສົ່ງເພື່ອໃຫ້ໄດ້ຮັບພາຍໃນວັນທີ 7 ກຸມພາ 2012, ແລະຈະຕ້ອງມີໝາຍເລກລະບຸເລກທີ (RIN) 1250-AA02.

ໃນການເພີ່ມເຕີມໃຫ້ກັບຂໍ້ທີ 503, ທາງ OFCCP ບັງຄັບໃຊ້ຄຳສັ່ງບໍລິຫານ 11246 ແລະພະລາດຊະກຳນົດການຊ່ວຍເຫຼືອການດັດແກ້ໃໝ່ຂອງນັກຮົບເກົ່າໃນຍຸກສົງຄາມຫວຽດນາມ 1974. ຕາມທີ່ໄດ້ດັດແກ້ນັ້ນ, ກົດໝາຍ 3 ສະບັບນີ້ຮຽກຮ້ອງໃຫ້ບັນດາຜູ້ທີ່ປະກອບທຸລະກິດກັບລັດຖະບານກາງ, ທັງທີ່ເປັນຜູ້ຮັບເໝົາ ແລະຜູ້ຮັບເໝົາຍ່ອຍ, ໃຫ້ປະຕິບັດຕາມມາດຕະຖານທີ່ຍຸຕິທຳ ແລະມີຄວາມເໝາະສົມທີ່ຕົນເອງດຳເນີນການຢ່າງເຂັ້ມແຂງ ແລະບໍ່ໃຫ້ມີການຈຳແນກຄວາມແຕກຕ່າງໃນການຈ້າງງານບົນພື້ນຖານທາງດ້ານເພດ, ເຜົ່າພັນ, ສີຜິວ, ສາດສະໜາ, ເຊື້ອຊາດ, ຄວາມພິການ ແລະສະຖານະເປັນນັກຮົບເກົ່າທີ່ໄດ້ຮັບການປົກປ້ອງ. ເພື່ອຂໍຂໍ້ມູນທົ່ວໄປ, ໃຫ້ໂທຫາສາຍດ່ວນບໍ່ເສຍຄ່າຂອງຫ້ອງການ OFCCP ທີ່ໝາຍເລກ 800-397-6251 ຫຼືເຂົ້າໄປເບິ່ງໃນເວັບໄຊທ໌ທີ່ http://www.dol.gov/ofccp.

###

U.S. Department of Labor news materials are accessible at http://www.dol.gov. The information above is available in large print, Braille, audio tape or disc from the COAST office upon request by calling 202-693-7828 or TTY 202-693-7755.